ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 83 /ລບ

ນະຄອນຫຼວງວຽງຈັນ, ວັນທີ 26 ມັງກອນ 2023

# ດຳລັດ

# ວ່າດ້ວຍທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ໜັງສືສະເໜີຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1512/ສສກ, ລົງວັນທີ 30 ທັນວາ 2022.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການຕິດຕາມ ກວດກາ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ເພື່ອໃຫ້ວຽກງານດັ່ງກ່າວ ສາມາດຈັດຕັ້ງປະຕິບັດໄດ້ ຢ່າງມີປະສິດທິພາບ, ມີປະສິດທິຜົນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ໃຫ້ການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ເປັນລະບົບຜ່ານປະຕູດຽວ, ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ

ທຶນການສຶກສາຕ່າງປະເທດ ແມ່ນທຶນສະໜັບສະໜູນ ການຮຽນ, ການສຶກສາ, ການຄົ້ນຄວ້າ ແລະ ການຝຶກອົບຮົມ ລວມທັງການດຳລົງຊີວິດ ໃຫ້ແກ່ຜູ້ຮຽນ.

ຜູ້ຮຽນ ແມ່ນນັກຮຽນ, ນັກສຶກສາ ແລະ ນັກຄົ້ນຄວ້າ ທີ່ເປັນພົນລະເມືອງລາວ ທີ່ໄດ້ຮັບທຶນຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ ຢູ່ຕ່າງປະເທດ ແຕ່ຊັ້ນມັດທະຍົມສຶກສາຕອນຕົ້ນ ຂຶ້ນໄປ ແລະ ພົນລະເມືອງຕ່າງປະເທດ ທີ່ໄດ້ຮັບທຶນຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ ຢູ່ ສປປ ລາວ.

**ມາດຕາ 3 ນະໂຍບາຍຂອງລັດ ກ່ຽວກັບ ທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ**

ລັດ ໃຫ້ຄວາມສຳຄັນ ແລະ ສົ່ງເສີມ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ມີການຂະຫຍາຍຕົວ ແລະ ມີຄວາມເຂັ້ມແຂງ ດ້ວຍການປະຕິບັດນະໂຍບາຍຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສ້າງເງື່ອນໄຂ ໃຫ້ຜູ້ຮຽນທີ່ເປັນພົນລະເມືອງລາວ ໄດ້ຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ ຢູ່ຕ່າງປະເທດ ແລະ ພົນລະເມືອງຕ່າງປະເທດ ໄດ້ຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ ຢູ່ ສປປ ລາວ.

ລັດ ເອົາໃຈໃສ່ ຊຸກຍູ້ ແລະ ສົ່ງເສີມວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ໂຄງລ່າງພື້ນຖານ, ວັດຖຸປະກອນ, ເຕັກນິກ ແລະ ເຕັກໂນໂລຊີ ເພື່ອໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ, ຂະຫຍາຍຕົວ ແລະ ຕອບສະໜອງຕາມຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ.

ລັດ ຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນ, ປະກອບສ່ວນ ແລະ ມີສ່ວນຮ່ວມເຂົ້າໃນການພັດທະນາວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ**

ການເຄື່ອນໄຫວວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ວິໄສທັດ, ຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ;

2. ຮັບປະກັນການຄຸ້ມຄອງທຸກແຫຼ່ງທຶນການສຶກສາຕ່າງປະເທດ ຢ່າງລວມສູນ, ເປັນເອກະພາບ ແລະ ຜ່ານປະຕູດຽວ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນການຄຸ້ມຄອງ ໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

4. ປະສານສົມທົບ ແລະ ມີສ່ວນຮ່ວມຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ.

**ມາດຕາ 6 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ການຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ, ການບໍລິການ, ການແລກປ່ຽນວັດທະນະທຳ-ສັງຄົມ, ການລະດົມທຶນການສຶກສາ ຈາກຕ່າງປະເທດ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ທຶນການສຶກສາຕ່າງປະເທດ

**ມາດຕາ 7 ປະເພດທຶນການສຶກສາຕ່າງປະເທດ**

ທຶນການສຶກສາຕ່າງປະເທດ ມີ ດັ່ງນີ້:

1. ທຶນຮ່ວມມືລັດຖະບານສອງຝ່າຍ;
2. ທຶນແລກປ່ຽນ;

3. ທຶນໂຄງການ ຫຼື ທຶນອົງການຈັດຕັ້ງສາກົນ;

4. ທຶນສ່ວນຕົວ.

ນອກຈາກທຶນການສຶກສາທີ່ກ່າວມາເທິງນີ້ ຍັງມີທຶນການສຶກສາອື່ນ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 8 ທຶນຮ່ວມມືລັດຖະບານສອງຝ່າຍ**

ທຶນຮ່ວມມືລັດຖະບານສອງຝ່າຍ ແມ່ນທຶນການສຶກສາ ບົນພື້ນຖານການຮ່ວມມື ລະຫວ່າງ ລັດຖະບານ ຂອງ ສປປ ລາວ ກັບ ລັດຖະບານ ຂອງຕ່າງປະເທດ ຊຶ່ງຜູ້ໃຫ້ທຶນ ຮັບຜິດຊອບຄ່າໃຊ້ຈ່າຍ ຕາມທີ່ໄດ້ຕົກລົງກັນ.

**ມາດຕາ 9 ທຶນແລກປ່ຽນ**

ທຶນແລກປ່ຽນ ແມ່ນທຶນການສຶກສາ ບົນພື້ນຖານການຮ່ວມມື ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນຂັ້ນແຂວງ ແລະ ສະຖານການສຶກສາຕ່າງໆ ທີ່ມີສັນຍາຮ່ວມມື ກັບອົງການຈັດຕັ້ງຂອງຕ່າງປະເທດ ຊຶ່ງຜູ້ໃຫ້ທຶນຮັບຜິດຊອບຄ່າໃຊ້ຈ່າຍ ຕາມທີ່ໄດ້ຕົກລົງກັນ.

**ມາດຕາ 10 ທຶນໂຄງການ ຫຼື ທຶນອົງການຈັດຕັ້ງສາກົນ**

ທຶນໂຄງການ ຫຼື ທຶນອົງການຈັດຕັ້ງສາກົນ ແມ່ນທຶນການສຶກສາ ທີ່ໄດ້ຮັບການສະໜອງທຶນຈາກໂຄງການພາຍໃນ, ຕ່າງປະເທດ, ອົງການຈັດຕັ້ງສາກົນ, ມູນນິທິ, ສະມາຄົມ ແລະ ອົງການຈັດຕັ້ງ ທີ່ບໍ່ຂຶ້ນກັບລັດຖະບານ ຊຶ່ງຜູ້ຮຽນໄດ້ຮັບທຶນສະໜັບສະໜູນ ຕາມເງື່ອນໄຂຂອງຜູ້ໃຫ້ທຶນ.

**ມາດຕາ 11 ທຶນສ່ວນຕົວ**

ທຶນສ່ວນຕົວ ແມ່ນທຶນການສຶກສາ ທີ່ຜູ້ຮຽນຮັບຜິດຊອບຄ່າໃຊ້ຈ່າຍ ທັງໝົດ.

**ມາດຕາ 12 ການຮັບທຶນການສຶກສາຕ່າງປະເທດ**

ການຮັບທຶນການສຶກສາຕ່າງປະເທດ ໃຫ້ອີງໃສ່ພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ວິໄສທັດ, ຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແຕ່ລະໄລຍະ;

2. ໃຫ້ບູລິມະສິດແກ່ທຶນການສຶກສາ ສຳລັບຂະແໜງການສຶກສາທີ່ພົ້ນເດັ່ນ ຂອງປະເທດທີ່ໃຫ້ທຶນການສຶກສາ ແລະ ເປັນທ່າແຮງ, ຈຳເປັນຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ;

3. ສົ່ງເສີມການສຶກສາ ກ່ຽວກັບການພັດທະນາ ເຕັກນິກວິທະຍາສາດ, ເຕັກໂນໂລຊີ, ການພັດທະນາເສດຖະກິດ-ສັງຄົມ ທີ່ກ້າວໜ້າ ແລະ ທັນສະໄໝ.

**ມາດຕາ 13 ການສິ້ນສຸດ ແລະ ການສືບຕໍ່ທຶນການສຶກສາຕ່າງປະເທດ**

ການສິ້ນສຸດ ແລະ ການສືບຕໍ່ ທຶນຮ່ວມມືລັດຖະບານສອງຝ່າຍ ແລະ ທຶນແລກປ່ຽນ ໃຫ້ປະຕິບັດຕາມສັນຍາຮ່ວມມື ຫຼື ບົດບັນທຶກຄວາມເຂົ້າໃຈ. ສຳລັບການສິ້ນສຸດ ແລະ ການສືບຕໍ່ ທຶນໂຄງການ ຫຼື ທຶນອົງການຈັດຕັ້ງສາກົນ ຫຼື ທຶນສ່ວນຕົວ ໃຫ້ປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ທຶນ ຫຼື ສະຖານການສຶກສາ.

# ພາກທີ III

# ຜູ້ຮຽນ

## ໝວດທີ 1

## ຜູ້ທີ່ຈະໄດ້ຮັບທຶນການສຶກສາຕ່າງປະເທດ

**ມາດຕາ 14 ຜູ້ທີ່ຈະໄດ້ຮັບທຶນການສຶກສາຕ່າງປະເທດ**

ຜູ້ທີ່ຈະໄດ້ຮັບທຶນການສຶກສາຕ່າງປະເທດ ມີ ດັ່ງນີ້:

1. ນັກຮຽນ ຊຶ່ງແມ່ນຜູ້ທີ່ຮຽນຈົບຊັ້ນປະຖົມ, ມັດທະຍົມສຶກສາຕອນຕົ້ນ, ມັດທະຍົມສຶກສາຕອນປາຍ, ວິຊາຊີບຊັ້ນຕົ້ນ ຫຼື ຊັ້ນກາງ;

2. ນັກສຶກສາ ຊຶ່ງແມ່ນຜູ້ທີ່ຮຽນຈົບການສຶກສາໃນລະດັບ ວິຊາຊີບຊັ້ນສູງ, ອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ ຫຼື ປະລິນຍາເອກ ລວມທັງຜູ້ທີ່ເຂົ້າຮ່ວມການຝຶກອົບຮົມໄລຍະແຕ່ ເກົ້າເດືອນ ຂຶ້ນໄປ;

3. ນັກຄົ້ນຄວ້າ ຊຶ່ງແມ່ນຜູ້ທີ່ເຮັດການວິໄຈ ແລະ ຄົ້ນຄວ້າ ໃນຫົວຂໍ້ໃດໜຶ່ງ ເພື່ອຊອກຫາຄວາມເປັນຈິງທາງດ້ານວິທະຍາສາດທຳມະຊາດ ແລະ ສັງຄົມ.

**ມາດຕາ 15 ເງື່ອນໄຂຜູ້ທີ່ຈະໄດ້ຮັບທຶນການສຶກສາຕ່າງປະເທດ**

ເງື່ອນໄຂຜູ້ທີ່ຈະໄດ້ຮັບທຶນການສຶກສາຕ່າງປະເທດ ມີ ດັ່ງນີ້:

1. ເງື່ອນໄຂລວມ;
2. ເງື່ອນໄຂດ້ານອາຍຸ;
3. ເງື່ອນໄຂດ້ານຄະແນນ.

**ມາດຕາ 16 ເງື່ອນໄຂລວມ**

ເງື່ອນໄຂລວມ ມີ ດັ່ງນີ້:

1. ຜ່ານການຄົ້ນຄວ້າ, ຄັດເລືອກ, ສອບເສັງດ້ວຍວິທີ ແລະ ຮູບການຕ່າງໆ ຕາມເງື່ອນໄຂ ຂອງຜູ້ໃຫ້ທຶນການສຶກສາ;

2. ມີຄຸນສົມບັດດີ, ມີຄວາມສາມາດ ແລະ ມີຊີວະປະຫວັດຈະແຈ້ງ;

3. ນັກຮຽນຜູ້ທີ່ອາຍຸ ຕໍ່າກວ່າ ສິບແປດປີ ຕ້ອງໄດ້ຮັບການເຫັນດີ ຈາກຜູ້ປົກຄອງ ຫຼື ສະຖານການສຶກສາ. ສໍາລັບຜູ້ທີ່ອາຍຸ ສິບແປດປີ ຂຶ້ນໄປ ຕ້ອງໄດ້ຮັບການເຫັນດີຈາກການຈັດຕັ້ງທີ່ກ່ຽວຂ້ອງ;

4. ມີສຸຂະພາບ ແຂງແຮງດີ ແລະ ຈິດໃຈ ປົກກະຕິ, ບໍ່ມີພະຍາດຕິດແປດ ຫຼື ພະຍາດຊໍາເຮື້ອ.

**ມາດຕາ 17 ເງື່ອນໄຂດ້ານອາຍຸ**

ເງື່ອນໄຂດ້ານອາຍຸ ມີ ດັ່ງນີ້:

1. ປະລິນຍາຕີ ອາຍຸບໍ່ເກີນ ສາມສິບຫ້າປີ ກ່ອນວັນສະໝັກທຶນການສຶກສາ;
2. ປະລິນຍາໂທ ອາຍຸບໍ່ເກີນ ສີ່ສິບປີ ກ່ອນວັນສະໝັກທຶນການສຶກສາ;
3. ປະລິນຍາເອກ ອາຍຸບໍ່ເກີນ ຫ້າສິບປີ ກ່ອນວັນສະໝັກທຶນການສຶກສາ;
4. ການສຶກສາລະດັບອື່ນ ແລະ ການຝຶກອົບຮົມ ໃຫ້ປະຕິບັດຕາມເງື່ອນໄຂ ຜູ້ໃຫ້ທຶນ.

ສໍາລັບການສຶກສາທີ່ນໍາໃຊ້ທຶນສ່ວນຕົວ ແມ່ນບໍ່ຈໍາກັດອາຍຸ, ສ່ວນທຶນໂຄງການ ແລະ ອົງການຈັດຕັ້ງສາກົນ ແມ່ນໃຫ້ປະຕິບັດຕາມເງື່ອນໄຂຜູ້ໃຫ້ທຶນ.

**ມາດຕາ 18 ເງື່ອນໄຂດ້ານຄະແນນ**

ຜູ້ທີ່ຈະໄດ້ຮັບທຶນການສຶກສາແຕ່ລະລະດັບ ຕ້ອງມີເງື່ອນໄຂດ້ານຄະແນນ ດັ່ງນີ້:

1. ຊັ້ນມັດທະຍົມຕອນຕົ້ນ ຄະແນນສະເລ່ຍຈົບຊັ້ນປະຖົມ ຕ້ອງໄດ້ 7/10 ຂຶ້ນໄປ ຫຼື ປະຕິບັດຕາມເງື່ອນໄຂ ຂອງຜູ້ໃຫ້ທຶນ;

2. ຊັ້ນມັດທະຍົມຕອນປາຍ ຄະແນນສະເລ່ຍຈົບຊັ້ນມັດທະຍົມຕອນຕົ້ນ ຕ້ອງໄດ້ 7/10 ຂຶ້ນໄປ ຫຼື ປະຕິບັດຕາມເງື່ອນໄຂ ຂອງຜູ້ໃຫ້ທຶນ;

3. ຊັ້ນສູງ ແລະ ປະລິນຍາຕີ ຄະແນນສະເລ່ຍຈົບຊັ້ນມັດທະຍົມຕອນປາຍ ຕ້ອງໄດ້ 7/10 ຂຶ້ນໄປ ຫຼື ປະຕິບັດຕາມເງື່ອນໄຂ ຂອງຜູ້ໃຫ້ທຶນ;

4. ປະລິນຍາໂທ ຫຼື ປະລິນຍາເອກ ຄະແນນສະເລ່ຍຈົບປະລິນຍາຕີ ຫຼື ປະລິນຍາໂທ ຕ້ອງໄດ້ 70/100 ຂຶ້ນໄປ ຫຼື ຄິດໄລ່ຕາມ ລະບົບໜ່ວຍກິດຕ້ອງໄດ້ 2,8 ຂຶ້ນໄປ ຫຼື ປະຕິບັດຕາມເງື່ອນໄຂ ຂອງຜູ້ໃຫ້ທຶນ;

5. ການຝຶກອົບຮົມ ໃຫ້ປະຕິບັດຕາມເງື່ອນໄຂ ຂອງຜູ້ໃຫ້ທຶນ.

## ໝວດທີ 2
## ການປະກອບເອກະສານ

**ມາດຕາ 19 ການປະກອບເອກະສານຂອງຜູ້ໄດ້ຮັບທຶນ ທີ່ເປັນພົນລະເມືອງລາວ**

ຜູ້ໄດ້ຮັບທຶນການສຶກສາ ທີ່ເປັນພົນລະເມືອງລາວ ທີ່ຜ່ານການຮັບຮອງຜົນການຄັດເລືອກ ຫຼື ການສອບເສັງແລ້ວ ຕ້ອງປະກອບເອກະສານ ເພື່ອຂໍອະນຸມັດໄປຮຽນ, ສຶກສາ, ຄົ້ນຄວ້າ ຫຼື ຝຶກອົບຮົມ ຈາກກະຊວງສຶກສາທິການ ແລະ ກິລາ.

ເອກະສານປະກອບ ມີ ດັ່ງນີ້:

1. ປະກອບເອກະສານ ຕາມການກຳນົດ ຂອງກະຊວງສຶກສາທິການ ແລະ ກິລາ;

2. ປະກອບເອກະສານ ຕາມການກຳນົດ ຂອງຜູ້ໃຫ້ທຶນການສຶກສາ.

**ມາດຕາ 20 ການປະກອບເອກະສານຂອງພົນລະເມືອງຕ່າງປະເທດ**

ພົນລະເມືອງຕ່າງປະເທດ ທີ່ໄດ້ຮັບທຶນການສຶກສາມາຮຽນ ຢູ່ ສປປ ລາວ ຕ້ອງປະກອບເອກະສານ ຕາມການກຳນົດ ຂອງກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 21 ການອະນຸມັດໃຫ້ໄປຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ພິຈາລະນາອະນຸມັດໃຫ້ຜູ້ໄດ້ຮັບທຶນການສຶກສາ ທີ່ເປັນພົນລະເມືອງລາວໄປຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ ຢູ່ຕ່າງປະເທດ ແລະ ພິຈາລະນາອະນຸມັດໃຫ້ພົນລະເມືອງຕ່າງປະເທດ ທີ່ໄດ້ຮັບທຶນມາສຶກສາ ຢູ່ ສປປ ລາວ.

## ໝວດທີ 3
## ສິດ ແລະ ພັນທະ ຂອງຜູ້ຮຽນ

**ມາດຕາ 22 ສິດຂອງຜູ້ຮຽນ ທີ່ເປັນພົນລະເມືອງລາວ**

ຜູ້ຮຽນ ທີ່ເປັນພົນລະເມືອງລາວ ມີ ສິດ ດັ່ງນີ້:

1. ໄດ້ຮັບການປົກປ້ອງ ແລະ ການຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ແລກປ່ຽນບົດຮຽນ ກ່ຽວກັບການສຶກສາ, ວັດທະນະທຳ-ສັງຄົມ ຢູ່ສະຖານການສຶກສາ ທີ່ຕົນຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ;

3. ເຂົ້າຮ່ວມການເຄື່ອນໄຫວກິດຈະກຳຕ່າງໆ ທີ່ການຈັດຕັ້ງກ່ຽວຂ້ອງຈັດຂຶ້ນ;

4. ໄດ້ຮັບການກໍ່ສ້າງ ແລະ ຍ້ອງຍໍ ຈາກການຈັດຕັ້ງທີ່ກ່ຽວຂ້ອງ ໃນກໍລະນີທີ່ມີຜົນການຮຽນໃນລະດັບດີ ແລະ ປະກອບສ່ວນເຄື່ອນໄຫວທີ່ພົ້ນເດັ່ນ;

5. ສະໜີຂໍຮຽນຕໍ່ຢູ່ພາຍໃນປະເທດ ໃນກໍລະນີຮຽນບໍ່ສຳເລັດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ ຂອງກະຊວງສຶກສາທິການ ແລະ ກິລາ;

6. ໄດ້ຮັບການພິຈາລະນາ ທຶນຮຽນຕໍ່ລະດັບສູງຂຶ້ນ ສຳລັບຜູ້ທີ່ມີຜົນການຮຽນໃນລະດັບດີ;

7. ປະກອບສ່ວນສະຕິປັນຍາ, ເຫື່ອແຮງ ແລະ ນຳໃຊ້ຄວາມຮູ້, ຄວາມສາມາດຂອງຕົນ ເຂົ້າໃນການປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດຊາດ ພາຍຫຼັງທີ່ສຳເລັດການສຶກສາ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 23 ພັນທະຂອງຜູ້ຮຽນ ທີ່ເປັນພົນລະເມືອງລາວ

ຜູ້ຮຽນ ທີ່ເປັນພົນລະເມືອງລາວ ມີ ພັນທະ ດັ່ງນີ້:

1. ສຶກສາຂໍ້ມູນພື້ນຖານກ່ຽວກັບວັດທະນະທຳ-ສັງຄົມ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງປະເທດທີ່ຈະໄປຮຽນ;

2. ເຄົາລົບ ແລະ ປະຕິບັດກົດໝາຍ, ລະບຽບການ, ວັດທະນະທຳ ແລະ ຮີດຄອງປະເພນີ ຂອງປະເທດທີ່ໄປຮຽນ;

3. ເຄົາລົບນັບຖືການຈັດຕັ້ງ, ຄູ, ບຸກຄະລາກອນການສຶກສາ, ຮັກແພງສາມັກຄີກັບໝູ່ເພື່ອນ, ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ຫຼື ນັກຝຶກອົບຮົມ ດ້ວຍກັນ;

4. ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ດ້ານການເມືອງ-ແນວຄິດ, ຄຸນສົມບັດ, ສິນທຳປະຕິວັດ, ອຸດົມການຂອງພັກ;

5. ປະຕິບັດຕາມສັນຍາ ກ່ຽວກັບການໄປຮຽນຕ່າງປະເທດ ລະຫວ່າງ ຜູ້ຮຽນ ກັບ ກະຊວງສຶກສາທິການ ແລະ ກິລາ;

6. ມອບບົດວິທະຍານິພົນຂອງຕົນ ໃຫ້ກະຊວງສຶກສາທິການ ແລະ ກິລາ ພາຍຫຼັງທີ່ສຳເລັດການສຶກສາຈາກຕ່າງປະເທດ ຈຳນວນ ໜຶ່ງ ເຫຼັ້ມ ສຳລັບຜູ້ທີ່ສຳເລັດການສຶກສາລະດັບ ປະລິນຍາໂທ ແລະ ປະລິນຍາເອກ;

7. ລາຍງານຕໍ່ກະຊວງສຶກສາທິການ ແລະ ກິລາ ພາຍຫຼັງສິ້ນສຸດການສຶກສາ;

8. ເອົາໃບປະກາສະນີຍະບັດ, ໃບຢັ້ງຢືນ ລວມທັງເອກະສານອື່ນທີ່ກ່ຽວຂ້ອງ ມາຢັ້ງຢືນລະດັບ ການສຶກສາ, ການຝຶກອົບຮົມ ຢູ່ກະຊວງສຶກສາທິການ ແລະ ກິລາ ພາຍຫຼັງສຳເລັດການສຶກສາ ຫຼື ການຝຶກອົບຮົມ;

9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 24 ສິດຂອງຜູ້ຮຽນ ທີ່ເປັນພົນລະເມືອງຕ່າງປະເທດ

ຜູ້ຮຽນ ທີ່ເປັນພົນລະເມືອງຕ່າງປະເທດ ມີ ສິດ ດັ່ງນີ້:

1. ໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

2. ໄດ້ຮັບການສຶກສາ ຕາມວິຊາທີ່ໄດ້ລົງທະບຽນໄວ້;

3. ເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບການສຶກສາຂອງສະຖານການສຶກສາທີ່ກ່ຽວຂ້ອງ;

4. ແລກປ່ຽນບົດຮຽນກ່ຽວກັບການສຶກສາ, ວັດທະນະທຳ-ສັງຄົມ ຢູ່ສະຖານການສຶກສາ ທີ່ຕົນຮຽນ ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ;

5. ໄດ້ຮັບການຍ້ອງຍໍ ຈາກການຈັດຕັ້ງທີ່ກ່ຽວຂ້ອງ ໃນກໍລະນີທີ່ມີຜົນການຮຽນໃນລະດັບດີ ແລະ ປະກອບສ່ວນເຄື່ອນໄຫວທີ່ພົ້ນເດັ່ນ;

6. ສຶກສາຮຽນຮູ້ ດ້ານວິຊາສະເພາະ ແລະ ເຂົ້າຮ່ວມເຄື່ອນໄຫວກິດຈະກຳຕ່າງໆ ຂອງສະຖານການສຶກສາ;

7. ພັກເຊົາ ຕາມການກະກຽມ ແລະ ສະໜອງສະຖານທີ່ພັກເຊົາ ຂອງສະຖານການສຶກສາທີ່ກ່ຽວຂ້ອງ;

8. ໄດ້ຮັບການບໍລິການດ້ານສຸຂະພາບ ຢູ່ ສປປ ລາວ ຫຼື ໄປປິ່ນປົວຢູ່ປະເທດຂອງຕົນ ຕາມແຕ່ລະກໍລະນີ;

9. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 25 ພັນທະຂອງຜູ້ຮຽນ ທີ່ເປັນພົນລະເມືອງຕ່າງປະເທດ**

ຜູ້ຮຽນ ທີ່ເປັນພົນລະເມືອງຕ່າງປະເທດ ມີ ພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງ ສປປ ລາວ;

2. ປະຕິບັດຕາມກົດລະບຽບ ຂອງສະຖານການສຶກສາທີ່ກ່ຽວຂ້ອງ;

3. ເຄົາລົບນັບຖື ການຈັດຕັ້ງ, ຄູ, ບຸກຄະລາກອນການສຶກສາ, ຮັກແພງສາມັກຄີກັບໝູ່ເພື່ອນ ແລະ ນັກສຶກສາ ດ້ວຍກັນ;

4. ເຄົາລົບວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 4
## ການຄຸ້ມຄອງ ແລະ ການສິ້ນສຸດການເປັນ ຜູ້ຮຽນ

**ມາດຕາ 26 ການຄຸ້ມຄອງຜູ້ຮຽນທີ່ເປັນພົນລະເມືອງລາວ**

ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ເປັນຜູ້ຄຸ້ມຄອງຜູ້ຮຽນ ທີ່ເປັນພົນລະເມືອງລາວ ໄປຮຽນ, ສຶກສາ, ຄົ້ນຄວ້າ ຫຼື ຝຶກອົບຮົມ ຢູ່ຕ່າງປະເທດ ໂດຍມີການປະສານສົມທົບກັບສະຖານການສຶກສາ ທີ່ກ່ຽວຂ້ອງ ຂອງປະເທດນັ້ນ ພ້ອມທັງລາຍງານສະພາບ ແລະ ສະຖິຕິນັກສຶກສາ ໃຫ້ກະຊວງສຶກສາທິການ ແລະ ກິລາ ຢ່າງເປັນປົກກະຕິ.

**ມາດຕາ 27 ການຄຸ້ມຄອງຜູ້ຮຽນ ທີ່ເປັນພົນລະເມືອງຕ່າງປະເທດ**

ສະຖານການສຶກສາບ່ອນຜູ້ຮຽນ ທີ່ເປັນພົນລະເມືອງຕ່າງປະເທດ ສຶກສາຢູ່ ເປັນຜູ້ຮັບຜິດຊອບ ແລະ ຄຸ້ມຄອງຜູ້ຮຽນ ໂດຍມີການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ພ້ອມທັງລາຍງານສະພາບ ແລະ ສະຖິຕິນັກສຶກສາ ໃຫ້ກະຊວງສຶກສາທິການ ແລະ ກິລາ ຢ່າງເປັນ ປົກກະຕິ.

**ມາດຕາ 28 ການສິ້ນສຸດການເປັນຜູ້ຮຽນ**

ຜູ້ຮຽນທີ່ເປັນພົນລະເມືອງລາວ ແລະ ຜູ້ຮຽນທີ່ເປັນພົນລະເມືອງຕ່າງປະເທດ ຈະສິ້ນສຸດການເປັນຜູ້ຮຽນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ສຳເລັດການສຶກສາ ຕາມຫຼັກສູດການສຶກສາ ຂອງສະຖານການສຶກສາທີ່ກ່ຽວຂ້ອງ;

2. ສອບເສັງບໍ່ຜ່ານ ຫຼື ບໍ່ສຳເລັດການສຶກສາ ຕາມຫຼັກສູດການສຶກສາ ຂອງສະຖານການສຶກສາທີ່ກ່ຽວຂ້ອງ;

3. ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ຫຼື ຂອງປະເທດທີ່ໃຫ້ທຶນການສຶກສາ ຊຶ່ງພາໃຫ້ຖືກສົ່ງກັບຄືນປະເທດ;

4. ເປັນພະຍາດທີ່ບໍ່ສາມາດປິ່ນປົວໃຫ້ເຊົາເປັນປົກກະຕິໄດ້ ຫຼື ເປັນຄົນພິການທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ໂດຍມີການປະເມີນ ແລະ ຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ;

5. ປະລະການຮຽນ, ການສຶກສາ, ການຄົ້ນຄວ້າ ຫຼື ການຝຶກອົບຮົມ ໂດຍບໍ່ມີເຫດຜົນ.

## ພາກທີ IV
## ຂໍ້ຫ້າມ

### ມາດຕາ 29 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ມີການກະທຳທີ່ແຕະຕ້ອງເຖິງກຽດສັກສີ ຂອງຊາດ ຫຼື ບົດບາດຂອງຄູ, ບຸກຄະລາກອນການສຶກສາ ແລະ ນັກສຶກສາ ລວມທັງສະຖານການສຶກສາ;

2. ໂຄສະນາຊວນເຊື່ອ ກ່ຽວກັບກິດຈະການດ້ານການສຶກສາ ຂອງຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ເກີນຄວາມເປັນຈິງ;

3. ຂັດຂວາງການເຄື່ອນໄຫວກ່ຽວກັບກິດຈະການດ້ານການສຶກສາ ຂອງຕ່າງປະເທດ;

4. ສວຍໃຊ້ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການຈັດຕັ້ງລັດ ເພື່ອຫາຜົນປະໂຫຍດ ສ່ວນຕົວ, ຄອບຄົວ ແລະ ພັກພວກ;

5. ໃຫ້ ຫຼື ຮັບ ສິນບົນ, ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ ກ່ຽວກັບທຶນການສຶກສາ ແລະ ສະຖານການສຶກສາ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 30 ຂໍ້ຫ້າມສຳລັບຜູ້ຮຽນ

ຫ້າມຜູ້ຮຽນ ທີ່ເປັນພົນລະເມືອງລາວ ແລະ ພົນລະເມືອງຕ່າງປະເທດ ມີ ພຶດຕິກຳ ດັ່ງນີ້:

1. ລະເມີດກົດລະບຽບ ຂອງສະຖານການສຶກສາ ແລະ ສະຖານທີ່ພັກອາໄສ;

2. ໃຫ້ສິນບົນ ແກ່ ຄູ, ບຸກຄະລາກອນການສຶກສາ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ;

3. ທຸດຈະລິດໃນການຮຽນ, ການສຶກສາ, ຝຶກອົບຮົມ, ການສອບເສັງ ແລະ ການທົດສອບ ຂອງສະຖານການສຶກສາທີ່ກ່ຽວຂ້ອງ;

4. ພົວພັນ, ຊື້-ຂາຍ ສິ່ງເສບຕິດ, ສິ່ງລາມົກອານາຈານ ແລະ ຫຼິ້ນການພະນັນທຸກປະເພດ ລວມທັງຄອບຄອງອາວຸດ, ວັດຖຸລະເບີດ ແລະ ສານເຄມີຕ້ອງຫ້າມ;

5. ພົວພັນຊູ້ສາວ ທີ່ຂັດກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດລາວ ແລະ ຕ່າງປະເທດ;

6. ແກ່ຍາວໄລຍະຮຽນ ເກີນກຳນົດເວລາຂອງຫຼັກສູດ ຫຼື ທຶນການສຶກສາ ແລະ ປ່ຽນວິຊາຮຽນ, ຢຸດຕິການຮຽນ ໂດຍບໍ່ມີເຫດຜົນ;

7. ສ້າງກຸ່ມກ້ອນ, ພັກພວກ ເພື່ອກໍ່ຄວາມບໍ່ສະຫງົບ ຢູ່ໃນສະຖານການສຶກສາ ແລະ ສັງຄົມ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 31 ຂໍ້ຫ້າມສຳລັບພະນັກງານທີ່ຮັບຜິດຊອບ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ**

ຫ້າມພະນັກງານທີ່ຮັບຜິດຊອບ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ມີ ພຶດຕິກຳ ດັ່ງນີ້:

1. ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານຂອງຕົນ;

2. ກົດໜ່ວງ ຖ່ວງດຶງເອກະສານ ກ່ຽວກັບທຶນການສຶກສາຕ່າງປະເທດ ແລະ ສະຖານການສຶກສາທີ່ກ່ຽວຂ້ອງ;

3. ຮັບສິນບົນ ຫຼື ທວງເອົາຜົນປະໂຫຍດ ກ່ຽວກັບທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

4. ໃຊ້ວາຈາບໍ່ສຸພາບ, ໃຊ້ຄວາມຮຸນແຮງ, ນາບຂູ່ ຕໍ່ຜູ້ຮຽນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ V
## ການຄຸ້ມຄອງ ແລະ ກວດກາ
## ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ

**ມາດຕາ 32 ອົງການຄຸ້ມຄອງ ແລະ ກວດກາ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຄຸ້ມຄອງ ແລະ ກວດກາວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ປະກອບດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;

2. ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;

3. ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ;

4. ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

3. ຄົ້ນຄວ້າ, ສ້າງມາດຕະຖານ ແລະ ເງື່ອນໄຂຜູ້ທີ່ຈະໄດ້ຮັບທຶນການສຶກສາຕ່າງປະເທດ;

4. ຄົ້ນຄວ້າ, ຄັດເລືອກ, ອະນຸມັດ ແລະ ຈັດສົ່ງນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ແລະ ນັກຝຶກອົບຮົມ ໄປສຶກສາຕ່າງປະເທດ ຫຼື ມາສຶກສາ ຢູ່ ສປປ ລາວ;

5. ໃຫ້ຄຳແນະນຳ ແລະ ຄຳປຶກສາ ກ່ຽວກັບທຶນການສຶກສາຕ່າງປະເທດ, ສະຖານການສຶກສາ ແກ່ຜູ້ຮຽນ ລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ;

6. ຈັດ ແລະ ເຂົ້າຮ່ວມ ກອງປະຊຸມສຳມະນາ ແລະ ງານວາງສະແດງກ່ຽວກັບທຶນການສຶກສາ ແລະ ສະຖານການສຶກສາ;

7. ສ້າງ, ບຳລຸງ ແລະ ຍົກລະດັບບຸກຄະລາກອນ ທີ່ຮັບຜິດຊອບການຄຸ້ມຄອງ ແລະ ກວດກາວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

8. ທຽບ ແລະ ຢັ້ງຢືນວຸດທິການສຶກສາ ໃຫ້ຜູ້ສຳເລັດການສຶກສາ ແລະ ຝຶກອົບຮົມ ລວມທັງຮັບການລາຍງານຕົວ ພາຍຫຼັງສິ້ນສຸດການສຶກສາ;

9. ສັງລວມສະຖິຕິຜູ້ຮຽນ ທີ່ເປັນພົນລະເມືອງລາວ ແລະ ພົນລະເມືອງຕ່າງປະເທດ;

10. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

11. ພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

3. ໃຫ້ຄຳແນະນຳ ແລະ ຄຳປຶກສາ ກ່ຽວກັບທຶນການສຶກສາຕ່າງປະເທດ, ສະຖານການສຶກສາ ແກ່ຜູ້ຮຽນ ລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ;

4. ຈັດ ແລະ ເຂົ້າຮ່ວມ ກອງປະຊຸມສຳມະນາ ແລະ ງານວາງສະແດງ ກ່ຽວກັບທຶນການສຶກສາຕ່າງປະເທດ ແລະ ສະຖານການສຶກສາ;

5. ຂຶ້ນແຜນ ສ້າງ, ບຳລຸງ ແລະ ຍົກລະດັບບຸກຄະລາກອນ ທີ່ຮັບຜິດຊອບການຄຸ້ມຄອງ ແລະ ກວດກາວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

6. ເກັບກຳ ແລະ ສັງລວມ ສະຖິຕິຜູ້ຮຽນ ທີ່ເປັນພົນລະເມືອງລາວ ແລະ ພົນລະເມືອງຕ່າງປະເທດ;

7. ປະສານສົມທົບກັບພະແນກ, ອົງການທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

8. ພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ຕາມການມອບໝາຍຂອງຂັ້ນເທິງຕົນ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 35 ສິດ ແລະ ໜ້າທີ່ ຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

3. ໃຫ້ຄຳແນະນຳ ແລະ ຄຳປຶກສາ ກ່ຽວກັບທຶນການສຶກສາຕ່າງປະເທດ, ສະຖານການສຶກສາ ແກ່ຜູ້ຮຽນ ລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ;

4. ເຂົ້າຮ່ວມກອງປະຊຸມສຳມະນາ ແລະ ງານວາງສະແດງ ກ່ຽວກັບທຶນການສຶກສາຕ່າງປະເທດ ແລະ ສະຖານການສຶກສາ;

5. ຂຶ້ນແຜນ ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນທີ່ຮັບຜິດຊອບການຄຸ້ມຄອງ ແລະ ກວດກາ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

6. ປະສານສົມທົບກັບຫ້ອງການ, ອົງການທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

3. ຄຸ້ມຄອງ ແລະ ສັງລວມ ສະຖິຕິຜູ້ຮຽນ ທີ່ເປັນພົນລະເມືອງລາວ ຢູ່ຕ່າງປະເທດ;

4. ເຂົ້າຮ່ວມກອງປະຊຸມສຳມະນາ ແລະ ງານວາງສະແດງ ກ່ຽວກັບທຶນການສຶກສາຕ່າງປະເທດ ແລະ ສະຖານການສຶກສາຢູ່ຕ່າງປະເທດ;

5. ປະສານສົມທົບກັບສະຖານການສຶກສາຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ຄຸ້ມຄອງ, ຕິດຕາມ ແລະ ແກ້ໄຂບັນຫາ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

6. ຍາດແຍ່ງທຶນການສຶກສາຈາກ ຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ສະຖານການສຶກສາຕ່າງໆ;

7. ລາຍງານສະພາບຂອງຜູ້ຮຽນທີ່ເປັນພົນລະເມືອງລາວ ໃຫ້ກະຊວງສຶກສາທິການ ແລະ ກິລາ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 37 ເນື້ອໃນການກວດກາ

ເນື້ອໃນການກວດກາ ວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ ແລະ ລະບຽບການ ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;
2. ການປະຕິບັດພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ ແລະ ແບບແຜນວິທີເຮັດວຽກ ຂອງອົງການຄຸ້ມຄອງວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;
3. ການປະຕິບັດແຜນການ, ແຜນງານ, ໂຄງການ ແລະ ສັນຍາຮ່ວມມື ກ່ຽວກັບວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;
4. ການຈັດຕັ້ງປະຕິບັດກ່ຽວກັບການຢັ້ງຢືນຜົນການສຶກສາ ພາຍຫຼັງສຳເລັດ ຫຼື ບໍ່ສຳເລັດການສຶກສາ.

### ມາດຕາ 38 ຮູບການກວດກາ

ການກວດກາທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາປົກກະຕິ ແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນໂດຍມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 39 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 40 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ ແລະ ລະບຽບການ.

## ພາກທີ VII

## ບົດບັນຍັດສຸດທ້າຍ

**ມາດຕາ 41 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການ ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ສະຖານການສຶກສາ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 42 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ໃນວັນທີ 01 ມີນາ 2023 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**